ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 2544 /ກສ

ນະຄອນຫຼວງວຽງຈັນ, ວັນທີ 11 JUN 2026

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2413/ກປມ, ລົງວັນທີ 22 ເມສາ 2026;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3077/ຫກ, ລົງວັນທີ 03 ມິຖຸນາ 2026.

### ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ການສົ່ງເສີມອຸດສາຫະກຳປຸງແຕ່ງໄມ້ ຕາມທິດທັນເປັນທັນສະໄໝ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງໄມ້ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຍົກສະມັດຖະພາບການຜະລິດປຸງແຕ່ງໄມ້ ໃຫ້ໄດ້ມາດຕະຖານ, ສ້າງມູນຄ່າເພີ່ມ ຕິດພັນກັບການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ແລະ ເປັນມິດກັບສິ່ງແວດລ້ອມ, ສົ່ງເສີມການນຳໃຊ້ຊັບພະຍາກອນໄມ້ໃຫ້ເກີດປະໂຫຍດສູງສຸດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການຄຸ້ມຄອງການ ສ້າງຕັ້ງ, ຂະຫຍາຍ, ຍົກຍ້າຍ ແລະ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ລວມທັງການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ, ສາມາດຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໝາຍເຖິງ ສະຖານທີ່ປຸງແຕ່ງທີ່ນຳໃຊ້ໄມ້ເປັນວັດຖຸດິບ ເຂົ້າຜ່ານຂະ

ຂອນການປຸງແຕ່ງ ປ່ຽນຈາກໄມ້ທ່ອນ ມາເປັນ ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ຜະລິດຕະພັນ ໄມ້ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ດ້ວຍການນໍາໃຊ້ເຄື່ອງຈັກ ແລະ ແຮງງານຄົນ ຢູ່ພາຍໃນໂຮງງານ;

**2.** ໃບຢັ້ງຢືນດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໝາຍເຖິງ ເອກະສານຢັ້ງຢືນທາງດ້ານກົດໝາຍ ທີ່ອອກໃຫ້ແກ່ຜູ້ໄດ້ຮັບອະນຸຍາດດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້;

**3.** ໄມ້ສິ້ນເຂົ້າ ໝາຍເຖິງ ໄມ້ທີ່ນໍາເຂົ້າມາຜະລິດປຸງແຕ່ງ ຢູ່ພາຍໃນໂຮງງານອຸດສາຫະກໍາປຸງແຕ່ງໄມ້;

**4.** ໄມ້ສິ້ນອອກ ໝາຍເຖິງ ໄມ້ທີ່ນໍາອອກຈາກໂຮງງານອຸດສາຫະກໍາປຸງແຕ່ງໄມ້;

**5.** ອັດຕາການນໍາໃຊ້ໄມ້ ໝາຍເຖິງ ບໍລິມາດໄມ້ ທີ່ວັດແທກໄດ້ຕົວຈິງຈາກການຜະລິດປຸງແຕ່ງ ໂດຍທຽບໃສ່ ບໍລິມາດໄມ້ສິ້ນເຂົ້າ;

**6.** ຜະລິດຕະພັນໄມ້ ໝາຍເຖິງ ຜະລິດຕະພັນໄມ້ ສໍາເລັດຮູບ ແລະ ເຄິ່ງສໍາເລັດຮູບ ທີ່ຜ່ານການປຸງແຕ່ງຈາກວັດຖຸດິບໄມ້, ເຫຍື່ອໄມ້ ໂດຍຜ່ານຂັ້ນຕອນການຜະລິດພາຍໃນໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແລະ ໄດ້ຮັບການຢັ້ງຢືນຈາກພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ ໂດຍນໍາໃຊ້ແບບພິມ ບຢຜມ 20;

**7.** ວິຊາການສະເພາະດ້ານ ໝາຍເຖິງ ຜູ້ທີ່ໄດ້ຮຽນຈົບ ຫຼື ຜ່ານການຝຶກອົບຮົມວິຊາສະເພາະດ້ານໃດ ໜຶ່ງທີ່ກ່ຽວຂ້ອງກັບກິດຈະການປຸງແຕ່ງໄມ້ ຫຼື ຂະແໜງວິຊາການທີ່ກ່ຽວຂ້ອງ;

**8.** ຜູ້ດໍາເນີນທຸລະກິດໄມ້ ໝາຍເຖິງ ຜູ້ທີ່ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້.

**ມາດຕາ 4** ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ຂະໜາດໂຮງງານອຸດສາຫະກໍາປຸງແຕ່ງໄມ້

**ມາດຕາ 5** ປະເພດໂຮງງານອຸດສາຫະກໍາປຸງແຕ່ງໄມ້

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໄດ້ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ໂຮງງານເລື່ອຍໄມ້;
2. ໂຮງງານປຸງແຕ່ງໄມ້;
3. ໂຮງງານເຟີນີເຈີໄມ້.

**ມາດຕາ 6** ໂຮງງານເລື່ອຍໄມ້

ໂຮງງານເລື່ອຍໄມ້ ແມ່ນ ໂຮງງານທີ່ນໍາເອົາ ໄມ້ທ່ອນ, ຕໍ ແລະ ປູດໄມ້ ເຂົ້າມາເລື່ອຍເປັນ ໄມ້ຕີຕັບ, ໄມ້ແປຮູບ ແລະ ໄມ້ຊອຍ ເພື່ອຕອບສະໜອງໃຫ້ແກ່ ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີໄມ້.

**ມາດຕາ 7** ໂຮງງານປຸງແຕ່ງໄມ້

ໂຮງງານປຸງແຕ່ງໄມ້ ແມ່ນ ໂຮງງານທີ່ນໍາເອົາໄມ້ ທ່ອນ, ຕີຕັບ, ແປຮູບ, ຊອຍ, ປອກ, ຝານ, ບົດ, ສັບ, ອັດ, ຕໍໄມ້ ແລະ ປູດໄມ້ ເຂົ້າຜ່ານຂະບວນການຜະລິດປຸງແຕ່ງ ໃຫ້ເປັນຜະລິດຕະພັນໄມ້ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເປັນຕົ້ນ ໄມ້ ປັກເກ້, ປູພື້ນ, ແອ້ມຝາ ແລະ ເພດານ, ໄມ້ ຕໍ່ເປັນເສັ້ນ, ອັດເຊື່ອມຕໍ່ປະສານ, ໄມ້ອັດ, ພາຊະນະບັນຈຸທີ່ເຮັດດ້ວຍໄມ້, ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້, ຜະລິດຕະພັນໄມ້ທີ່ໃຊ້ໃນເຮືອນຄົວ, ຜະລິດຕະພັນໄມ້ປະກອບໃນອາຄານ.

ມາດຕາ 8 ໂຮງງານເຟີນີເຈີໄມ້

ໂຮງງານເຟີນີເຈີໄມ້ ແມ່ນ ໂຮງງານທີ່ນໍາເອົາໄມ້ ທ່ອນ, ຕີຕັບ, ແປຮູບ, ຊອຍ, ໄມ້ອັດ, ຕໍໄມ້ ແລະ ປູດໄມ້ ເຂົ້າຜ່ານຂະບວນການຜະລິດປຸງແຕ່ງ ໃຫ້ເປັນຜະລິດຕະພັນໄມ້ ເປັນຕົ້ນ ວົງກົບ, ບານ, ໂຕະ, ຕັ່ງ, ຕູ້, ຕຽງ, ໂຊຟາ, ຂອບຮູບ, ເຄື່ອງຕົບແຕ່ງ, ແກະສະຫຼັກ, ປະດັບເອ້, ໃຊ້ສອຍ, ເຄື່ອງຫັດຖະກໍາ.

ມາດຕາ 9 ຂະໜາດໂຮງງານອຸດສາຫະກໍາປຸງແຕ່ງໄມ້

ຂະໜາດໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແມ່ນ ອີງໃສ່ກໍາລັງແຮງລວມຂອງເຄື່ອງຈັກ ຫຼື ຈໍານວນແຮງງານລວມ ຊຶ່ງແບ່ງອອກເປັນ ສາມ ຂະໜາດ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ປະກອບດ້ວຍ ກໍາລັງແຮງລວມຂອງເຄື່ອງຈັກ ແຕ່ 10 ແຮງມ້າ ຫາ 50 ແຮງມ້າ ຫຼືຈໍານວນແຮງງານ ແຕ່ 10 ຫາ 50 ຄົນ;

2. ໂຮງງານຂະໜາດກາງ ປະກອບດ້ວຍ ກໍາລັງແຮງລວມຂອງເຄື່ອງຈັກ ແຕ່ 51 ແຮງມ້າ ຫາ 200 ແຮງມ້າ ຫຼື ຈໍານວນແຮງງານ ແຕ່ 51 ຫາ 200 ຄົນ;

3. ໂຮງງານຂະໜາດໃຫຍ່ ປະກອບດ້ວຍ ກໍາລັງແຮງລວມຂອງເຄື່ອງຈັກ ແຕ່ 201 ແຮງມ້າຂຶ້ນໄປ ຫຼື ຈໍານວນແຮງງານ ແຕ່ 201 ຄົນຂຶ້ນໄປ.

## ໝວດທີ 3
## ມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້

ມາດຕາ 10 ມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້

ມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້ ປະກອບມີ ດັ່ງນີ້:

1. ສະຖານທີ່ຕັ້ງ;
2. ສິ່ງປຸກສ້າງ ແລະ ອາຄານຜະລິດ;
3. ເຄື່ອງຈັກ ແລະ ການຕິດຕັ້ງ;
4. ຂະບວນການຜະລິດ;
5. ການນໍາໃຊ້ວັດຖຸດິບ;
6. ຜະລິດຕະພັນ;
7. ການບໍລິຫານ;
8. ວິຊາການ ແລະ ກໍາມະກອນ;
9. ຄວາມປອດໄພ;
10. ສຸຂານາໄມ;
11. ສິ່ງແວດລ້ອມ.

ມາດຕາ 11 ມາດຕະຖານສະຖານທີ່ຕັ້ງ

ມາດຕະຖານສະຖານທີ່ຕັ້ງ ຂອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ມີ ດັ່ງນີ້:

1. ຕັ້ງຢູ່ເຂດອຸດສາຫະກໍາ ຫຼື ນິຄົມອຸດສາຫະກໍາ, ເຂດທີ່ດິນທີ່ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ຕັ້ງຢູ່ຫ່າງໄກຈາກ ຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທໍາ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ເຂດປົກປັກຮັກສາແຫຼ່ງນໍ້າ, ເຂດອະນຸລັກຊີວະນາໆພັນ ແລະ ເຂດຫວງຫ້າມອື່ນ ທີ່ລັດບໍ່ອະນຸຍາດໃຫ້ດໍາເນີນກິດຈະການ;

3. ມີເສັ້ນທາງເຂົ້າອອກສະດວກ ແລະ ມີເນື້ອທີ່ ທີ່ເໝາະສົມກັບການດໍາເນີນກິດຈະການໂຮງງານ.

ມາດຕາ 12 ມາດຕະຖານສິ່ງປຸກສ້າງ ແລະ ອາຄານຜະລິດ

ມາດຕະຖານສິ່ງປຸກສ້າງ ແລະ ອາຄານຜະລິດ ມີ ດັ່ງນີ້:

1. ມີ ສິ່ງປຸກສ້າງສຳລັບການຄຸ້ມຄອງບໍລິຫານ, ອາຄານຫ້ອງອາຫານ, ບ່ອນ ພັກຜ່ອນ, ຈອດລົດ, ຫ້ອງນ້ຳ, ສູບຢາ, ມີລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອອື່ນ ແລະ ສິ່ງປຸກສ້າງອື່ນ;

2. ມີ ອາຄານຜະລິດ ເຊັ່ນ ອາຄານສຳລັບການຜະລິດ, ສາງ ຫຼື ບ່ອນ ເກັບມ້ຽນວັດຖຸດິບ, ເກັບມ້ຽນຜະລິດຕະພັນ ແລະ ອາຄານອື່ນ ທີ່ນຳໃຊ້ເຂົ້າໃນວຽກງານອຸດສາຫະກຳປຸງແຕ່ງໄມ້;

3. ໂຄງສ້າງອາຄານ ແລະ ສິ່ງປຸກສ້າງ ຕ້ອງແໜ້ນໜາ ແລະ ເໝາະສົມກັບການດຳເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ;

4. ຕິດຕັ້ງລະບົບໄຟຟ້າ, ລະບົບລະບາຍອາກາດ, ລະບົບດູດຝຸ່ນ ທີ່ຮັບປະກັນຄວາມປອດໄພ;

5. ຕິດປ້າຍຊື່ໂຮງງານ, ປ້າຍເຕືອນ, ບັງຄັບ, ເກືອດຫ້າມ ແລະ ປ້າຍຊີ້ບອກສະຖານທີ່ເຮັດວຽກຕ່າງໆ.

ມາດຕາ 13 ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ

ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ ມີ ດັ່ງນີ້:

1. ເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ເໝາະສົມຕາມຍຸກສະໄໝ, ຖືກຕ້ອງກັບເປົ້າໝາຍການນຳໃຊ້, ບໍ່ມີຄວາມສ່ຽງ ຕໍ່ການເກີດຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ. ໃນນັ້ນ, ເຄື່ອງຈັກທີ່ຕິດຕັ້ງ ຕ້ອງເປັນເຄື່ອງຈັກທີ່ມີປະສິດທິພາບສູງ, ປະຢັດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດ;

2. ຕິດຕັ້ງເຄື່ອງຈັກ ໃຫ້ຖືກຕ້ອງຕາມລະບົບມາດຕະຖານເຕັກນິກ ແລະ ຖືກຕາມ ແຜນຜັງການຕິດຕັ້ງເຄື່ອງຈັກ ແລະ ຮັບປະກັນຄວາມປອດໄພໃນເວລານຳໃຊ້;

3. ຂຶ້ນບັນຊີເຄື່ອງຈັກໃຫ້ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນ ເຄື່ອງຈັກ ສາຍພານ, ຈັກຕັດໄມ້, ຈັກຊອຍໄມ້, ຈັກຝົນໃບເລື່ອຍ, ເຕຣນຍົກໄມ້, ລົດຟຶກລິບ, ເຕົາອົບໄມ້, ເຄື່ອງຈັກດູດຂີ້ເລື່ອຍ, ລວມທັງເຄື່ອງຈັກຮັບໃຊ້ການປຸງແຕ່ງເປັນຜະລິດຕະພັນ;

4. ມີແຜນການ ຕິດຕາມ, ກວດກາ, ບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ຢ່າງເປັນປົກກະຕິ.

ມາດຕາ 14 ມາດຕະຖານຂະບວນການຜະລິດ

ມາດຕະຖານຂະບວນການຜະລິດ ມີ ດັ່ງນີ້:

1. ຂະບວນການຜະລິດ ຕ້ອງເປັນລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ ເລີ່ມແຕ່ຂອດການນຳວັດຖຸດິບເຂົ້າຜະລິດ ຈົນຮອດຂອດຜະລິດຕະພັນສຸດທ້າຍ ໂດຍມີລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ;

2. ມີການບັນທຶກ ໄມ້ ສົ້ນເຂົ້າ ແລະ ສົ້ນອອກ ຕາມຕົວຈິງ ໂດຍນຳໃຊ້ແບບພິມ ສຂສອ 19;

3. ທຸກຂອດສາຍງານການຜະລິດ ຕ້ອງມີປ້າຍຊີ້ບອກ, ບໍ່ໃຫ້ມີສິ່ງກີດຂວາງທາງຍ່າງ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

ມາດຕາ 15 ມາດຕະຖານການນຳໃຊ້ວັດຖຸດິບ

ມາດຕະຖານການນຳໃຊ້ວັດຖຸດິບ ມີ ດັ່ງນີ້:

1. ມີແຫຼ່ງທີ່ມາຂອງໄມ້ຖືກຕ້ອງ ໂດຍຜ່ານການຢັ້ງຢືນ ຈາກຂະແໜງການທີ່ກ່ຽວຂ້ອງ;

2. ໄມ້ທີ່ນຳເຂົ້າໂຮງງານ ຕ້ອງມີແຫຼ່ງທີ່ມາຢ່າງຊັດເຈນ ເຊັ່ນ ປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ປ່າປູກ, ປ່າຊົມໃຊ້ຂອງບ້ານ, ໄມ້ທຳມະຊາດທີ່ມີໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ໄມ້ທີ່ຖືກຮິບເປັນຂອງລັດ ຫຼື ໄມ້ນຳເຂົ້າຈາກຕ່າງປະເທດ;

3. ໄມ້ທີ່ມາຈາກ ປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ປ່າຊົມໃຊ້ຂອງບ້ານ ລວມທັງໄມ້ທຳມະຊາດທີ່ມີໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ຮັບການຢັ້ງຢືນ ຕາມແບບພິມ ຫຼທມຊ 16 ແລະ ແບບພິມ ຫຼທມປ 17 ສຳລັບໄມ້ທີ່ມາຈາກສວນປູກ.

**ມາດຕາ 16 ມາດຕະຖານຜະລິດຕະພັນໄມ້**

ມາດຕະຖານຜະລິດຕະພັນໄມ້ ມີ ດັ່ງນີ້:

1. ຕ້ອງປຸງແຕ່ງໄມ້ໃຫ້ເປັນຜະລິດຕະພັນໃດໜຶ່ງ ດ້ວຍການສ້າງມູນຄ່າເພີ່ມ ເຮັດໃຫ້ຜະລິດຕະພັນມີຄຸນນະພາບດີ ແລະ ມີມາດຕະຖານສູງ ເພື່ອຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ;

2. ມີເຄື່ອງໝາຍການຄ້າ ຫຼື ໄດ້ຮັບການຈົດທະບຽນ ຕາມກົດໝາຍ ແລະ ລະບຽບການ;

3. ສຳລັບຜະລິດຕະພັນໄມ້ ເພື່ອສົ່ງອອກ ຕ້ອງປະຕິບັດຕາມ ລາຍການ ແລະ ຂະໜາດ ຜະລິດຕະພັນໄມ້ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດໃນແຕ່ລະໄລຍະ.

**ມາດຕາ 17 ມາດຕະຖານການບໍລິຫານ**

ມາດຕະຖານການບໍລິຫານ ມີ ດັ່ງນີ້:

1. ມີ ໂຄງຮ່າງການຈັດຕັ້ງ ຢ່າງເປັນລະບົບ;

2. ມີແຜນການບໍລິຫານ ແລະ ຄຸ້ມຄອງການຜະລິດ ປະຈຳປີ ໂດຍຜ່ານການຢັ້ງຢືນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ;

3. ປະຕິບັດ ຕາມມາດຕະຖານພາຍໃນ ຫຼື ສາກົນໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 18 ມາດຕະຖານວິຊາການ ແລະ ກຳມະກອນ**

ມາດຕະຖານວິຊາການ ແລະ ກຳມະກອນ ມີ ດັ່ງນີ້:

1. ຜູ້ທີ່ເປັນຫົວໜ້າ ຫຼື ຮອງຫົວໜ້າ ແຕ່ລະສາຍງານການຜະລິດ ແລະ ຄຸ້ມຄອງບໍລິຫານ ຕ້ອງມີ ໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ ແລະ ມີປະສົບການທີ່ແນ່ນອນ ຢ່າງໜ້ອຍໜຶ່ງຄົນ;

2. ກຳມະກອນ ຕ້ອງຜ່ານການຝຶກອົບຮົມດ້ານເຕັກນິກວິຊາການ ຕາມໜ້າວຽກຕົວຈິງ;

3. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບເປັນປົກກະຕິ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**ມາດຕາ 19 ມາດຕະຖານຄວາມປອດໄພ**

ມາດຕະຖານຄວາມປອດໄພ ມີ ດັ່ງນີ້:

1. ມີໜ່ວຍງານຮັບຜິດຊອບດ້ານຄວາມປອດໄພ ເປັນຜູ້ຕາງໜ້າ ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ພະນັກງານຮັບຜິດຊອບດ້ານຄວາມປອດໄພໃນໂຮງງານ;

2. ຜູ້ຮັບຜິດຊອບຄວາມປອດໄພ ວິຊາການ ແລະ ກຳມະກອນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;

3. ວິຊາການ ແລະ ກຳມະກອນ ຕ້ອງໃສ່ເຄື່ອງມືປ້ອງກັນແຮງງານ ໂດຍຂຶ້ນກັບຄວາມຈຳເປັນ ຂອງແຕ່ລະໜ້າວຽກ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນປິດປາກ, ດັງ, ຫູ, ຖົງມື;

4. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກໃສ່, ມີການຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ແລະ ມີລະບົບປ້ອງກັນອັກຄີໄພ ເປັນຕົ້ນ ລະບົບສັນຍານເຕືອນໄພ, ບັ້ງດັບໄຟ ຫຼື ລະບົບນ້ຳມອດໄຟ ທີ່ສາມາດນຳໃຊ້ໄດ້;

5. ສະຖານທີ່ ທີ່ເປັນອັນຕະລາຍ ຫຼື ບ່ອນທີ່ມີຄວາມສ່ຽງອາດຈະເກີດອຸປະຕິເຫດ ຕ້ອງຕິດຕັ້ງປ້າຍເຕືອນ, ປ້າຍຫ້າມ, ປ້າຍຊີ້ບອກ ແລະ ແຕ້ມເສັ້ນຂອບເຂດຕ່າງໆ.

**ມາດຕາ 20 ມາດຕະຖານສຸຂານາໄມ**

ມາດຕະຖານສຸຂານາໄມ ມີ ດັ່ງນີ້:

1. ມີ ຜູ້ຮັບຜິດຊອບວຽກງານສຸຂານາໄມ ຢ່າງໜ້ອຍໜຶ່ງຄົນ;

2. ມີ ຕູ້ຢາ ແລະ ອຸປະກອນ ປະຖົມພະຍາບານເບື້ອງຕົ້ນ;

3. ມີ ນ້ຳດື່ມ ທີ່ສະອາດ ແລະ ລະບົບນ້ຳໃຊ້ ຢ່າງພຽງພໍ ເປັນຕົ້ນ ລະບົບນ້ຳປະປາ ຫຼື ນ້ຳບາດານ;
4. ມີ ຫ້ອງນ້ຳສະອາດທີ່ເໝາະສົມ;
5. ປະຕິບັດມາດຕະການປ້ອງກັນການແຜ່ລະບາດເຊື້ອພະຍາດຢ່າງເຂັ້ມງວດ.

**ມາດຕາ 21** ມາດຕະຖານສິ່ງແວດລ້ອມ

ມາດຕະຖານສິ່ງແວດລ້ອມ ມີ ດັ່ງນີ້:

1. ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;

2. ມີມາດຕະການປ້ອງກັນ ແລະ ຄວບຄຸມ ມົນລະພິດ ທາງດິນ, ນ້ຳ, ອາກາດ ແລະ ສິ່ງລົບກວນ ບໍ່ໃຫ້ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ;

3. ມີລະບົບບຳບັດ ຫຼື ກຳຈັດສິ່ງເສດເຫຼືອໃນໂຮງງານ ທີ່ເປັນລະບົບມາດຕະຖານ;

4. ມົນລະພິດ ແລະ ສິ່ງເສດເຫຼືອ ຕ້ອງໄດ້ຮັບການບຳບັດ ໃຫ້ຢູ່ໃນເກນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້.

## ໝວດທີ 4
## ການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 22** ການສ້າງຕັ້ງ ໂຮງງານອຸດສາຫະກຳປຸງແຕ່ງໄມ້

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຈະສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລ້ວນຳສະເໜີຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 23** ເງື່ອນໄຂການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ;
2. ມີ ທຶນຮອນ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ຢ່າງພຽງພໍ;
3. ມີ ວິຊາການ ແລະ ກຳມະກອນ ທີ່ມີຄຸນວຸດທິການສຶກສາທີ່ກ່ຽວຂ້ອງ;
4. ມີ ພື້ນທີ່ສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ມີເນື້ອທີ່ປູກໄມ້ທີ່ເໝາະສົມ ເພື່ອຕອບສະໜອງວັດຖຸດິບໄມ້ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃນອະນາຄົດ;
5. ມີ ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບ ການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້;
6. ມີ ເງື່ອນໄຂອື່ນ ທີ່ກ່ຽວຂ້ອງກັບການຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້.

**ມາດຕາ 24** ບົດວິພາກເສດຖະກິດ-ເຕັກນິກ ໂຮງງານອຸດສາຫະກຳປຸງແຕ່ງໄມ້

ການສ້າງບົດວິພາກເສດຖະກິດ-ເຕັກນິກ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້. ບົດວິພາກເສດຖະກິດ-ເຕັກນິກ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສະພາບລວມໂຄງການ
   1) ທີ່ຕັ້ງຂອງໂຄງການ;
   2) ເຫດຜົນການສະເໜີໂຄງການ;

3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.

2. ເຕັກນິກການກໍ່ສ້າງໂຮງງານອຸດສາຫະກຳປຸງແຕ່ງໄມ້

1) ສະຖານທີ່ສ້າງຕັ້ງ;

2) ແຜນການປຸກສ້າງອາຄານໂຮງງານ ແລະ ອາຄານອື່ນ;

3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;

4) ແຜນການນຳໃຊ້ວັດຖຸດິບ;

5) ແຜນອາດຂະໜອນການຜະລິດ ແລະ ບິດອະທິບາຍ;

6) ການຄຸ້ມຄອງດ້ານສິ່ງແວດລ້ອມ;

7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ;

8) ສະຫວັດດີການສັງຄົມຂອງໂຮງງານ;

9) ສຳເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;

10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກລັດ ໃນການຊຸກຍູ້, ຕິດຕາມ ກວດກາ.

3. ພາກເສດຖະກິດ

1) ຕົ້ນທຶນການຜະລິດ;

2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ຜົນກຳໄລ;

3) ແຜນການຜະລິດ ແລະ ການຈຳໜ່າຍ;

4) ແຜນການນຳໃຊ້ແຮງງານ.

4. ຄາດຄະເນຜົນໄດ້ຮັບຈາກໂຄງການ

1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);

2) ການວິເຄາະຄວາມສ່ຽງ ໃນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້.

**ມາດຕາ 25** ເອກະສານປະກອບ ການຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ເອກະສານຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ໂດຍນຳໃຊ້ແບບພິມ ຮຽມ 01;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບຕາດິນ ຫຼື ໃບຢັ້ງຢືນນຳໃຊ້ທີ່ດິນ, ສັນຍາເຊົ່າ ຫຼື ສຳປະທານທີ່ດິນ/ສິ່ງປຸກສ້າງ (ຖ້າມີ);
4. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
5. ສຳເນົາ ໃບຢັ້ງຢືນການມອບອາກອນ;
6. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
7. ສຳເນົາ ໃບຢັ້ງຢືນຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກ;
8. ສຳເນົາ ໃບອະນຸຍາດປຸກສ້າງ;
9. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ.

**ມາດຕາ 26** ຂັ້ນຕອນ ການຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ຂັ້ນຕອນ ການຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປະຕິບັດ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ກວດກາເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ການກວດກາສະຖານທີ່ຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້;
3. ການພິຈາລະນາສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້.

ມາດຕາ 27 ການຮັບຄຳຮ້ອງ ແລະ ກວດກາ ເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ພາຍຫຼັງໄດ້ຮັບເອກະສານ ປະກອບຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ, ຜູ້ໄດ້ຮັບຊຸດເອກະສານ ຕ້ອງກວດກາຄວາມຖືກຕ້ອງຂອງເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ມາດຕາ 28 ການກວດກາສະຖານທີ່ຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ການກວດກາສະຖານທີ່ຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໄດ້ແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ແລະ ຂະໜາດກາງ ມອບໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງບ້ານ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການກວດກາ ຕາມແຕ່ລະກໍລະນີ;

2. ໂຮງງານຂະໜາດໃຫຍ່ ມອບໃຫ້ກົມປ່າໄມ້ ປະສານສົມທົບກັບ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງບ້ານ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການກວດກາ ຕາມແຕ່ລະກໍລະນີ.

ການລົງກວດກາແຕ່ລະຄັ້ງ ຕ້ອງສ້າງບົດບັນທຶກ ໂດຍກຳນົດແຈ້ງສະຖານທີ່ຕັ້ງໂຮງງານ, ສະພາບແວດລ້ອມ ອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 29 ການພິຈາລະນາສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້

ພາຍຫຼັງສຳເລັດ ການກວດກາສະຖານທີ່ຕັ້ງໂຮງງານ ແລະ ມີບົດບັນທຶກການກວດກາ ທີ່ເຫັນດີໃຫ້ດຳເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນເຊັນບົດບັນທຶກການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດນ້ອຍ ແລະ ຂະໜາດກາງ ບົນພື້ນຖານການເຫັນດີຂອງປະທານຄະນະກຳມະການປົກຄອງ ຂັ້ນແຂວງ ໂດຍນຳໃຊ້ແບບພິມ ຮຽມ 02;

2. ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດໃຫຍ່ ຕາມການສະເໜີຂອງກົມປ່າໄມ້ ໂດຍນຳໃຊ້ແບບພິມ ຮຽມ 03.

ພາຍຫຼັງ ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ ຜູ້ດຳເນີນກິດຈະການ ຕ້ອງດຳເນີນການຜະລິດທົດລອງ ພາຍໃນກຳນົດ ສາມສິບ ວັນ ນັບແຕ່ວັນໄດ້ຮັບອະນຸຍາດ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຂາຍ ຜະລິດຕະພັນ ຢ່າງເດັດຂາດ. ຈາກນັ້ນ ໃຫ້ດຳເນີນການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ໄດ້ກຳນົດໃນ ມາດຕາ 32 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ການຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

ມາດຕາ 30 ການຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ ຜູ້ໄດ້ຮັບອະນຸຍາດ ຕ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສະກຳປຸງແຕ່ງ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ຢ່າງຖືກຕ້ອງ ຕາມມາດຕະຖານເຕັກນິກໂຮງງານອຸດສາຫະກຳປຸງແຕ່ງໄມ້.

**ມາດຕາ 31 ການປະກອບເອກະສານຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ເອກະສານປະກອບຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ແບບພິມ ຮງມ 04;
2. ຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້;
3. ລາຍການເຄື່ອງຈັກໃນໂຮງງານອຸດສາຫະກຳປຸງແຕ່ງໄມ້;
4. ແຜນການເຄື່ອນໄຫວ ປະຈຳປີ;
5. ຮູບຖ່າຍຜູ້ດຳເນີນກິດຈະການໂຮງງານ ຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ ໃບ;
6. ສຳເນົາ ໃບທະບຽນວິສາຫະກິດ;
7. ສຳເນົາ ໃບຢັ້ງຢືນການມອບອາກອນ;
8. ສຳເນົາ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ;
9. ສຳເນົາ ໃບອະນຸຍາດປຸກສ້າງ;
10. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
11. ສຳເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສຳປະທານທີ່ດິນ (ຖ້າມີ).

**ມາດຕາ 32 ຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປະຕິບັດ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ກວດກາ ເອກະສານຂໍອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ການກວດກາ ແລະ ປະເມີນຜົນ ໂຮງງານອຸດສາຫະກຳປຸງແຕ່ງໄມ້;
3. ການພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້.

**ມາດຕາ 33 ການຮັບຄຳຮ້ອງ ແລະ ກວດກາເອກະສານຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງໄດ້ຮັບເອກະສານ ປະກອບຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ ຜູ້ໄດ້ຮັບຊຸດເອກະສານ ຕ້ອງກວດກາຄວາມຖືກຕ້ອງຂອງເນື້ອໃນເອກະສານ ຂໍອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 34 ການລົງກວດກາ ແລະ ປະເມີນຜົນໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການ ເພື່ອລົງກວດກາ ແລະ ປະເມີນຜົນ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ບົດວິພາກເສດຖະກິດ-ເຕັກນິກ, ການລົງກວດກາແຕ່ລະຄັ້ງ ຕ້ອງສ້າງບົດບັນທຶກໄວ້ທຸກຄັ້ງ. ບົດບັນທຶກດັ່ງກ່າວ ຕ້ອງໄດ້ລົງລາຍເຊັນຮ່ວມກັບເຈົ້າຂອງໂຮງງານ ເພື່ອເປັນຫຼັກຖານ.

ໃນກໍລະນີ ການກວດກາຫາກເຫັນວ່າ ຂະບວນການຜະລິດບໍ່ສາມາດດຳເນີນການຜະລິດຕາມມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ບໍ່ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ. ຄະນະກຳມະການຕ້ອງໃຫ້ການແນະນຳ ເພື່ອປັບປຸງ ແລະ ແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກການກວດກາ, ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງ ແລະ ແກ້ໄຂ ຕາມບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອກວດກາຄືນ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 35 ການພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງສຳເລັດການກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນສຳເລັດການກວດກາເປັນຕົ້ນໄປ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດນ້ອຍ ແລະ ຂະໜາດກາງ ຕາມການສະເໜີຂອງຂະແໜງປ່າໄມ້ ໂດຍນຳໃຊ້ແບບພິມ ຮງມ 05;

2. ຫົວໜ້າ ກົມປ່າໄມ້ ເປັນຜູ້ອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດໃຫຍ່ ໂດຍນຳໃຊ້ແບບພິມ ຮງມ 06;

**ມາດຕາ 36 ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ເອກະສານອະນຸຍາດໃຫ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ພາຍຫຼັງທີ່ໄດ້ສຳເລັດການກໍ່ສ້າງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງແລ້ວ.

ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້ ໂດຍໃຫ້ຕິດໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດ ຂອງຕົນ.

**ມາດຕາ 37 ການຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ກ່ອນຈະໝົດກຳນົດເວລາ ສາມສິບ ວັນ ຜູ້ດຳເນີນກິດຈະການ ຕ້ອງສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້. ຖ້າໝົດກຳນົດ ສອງ ປີແລ້ວ ຫາກຜູ້ດຳເນີນກິດຈະການໂຮງງານ ບໍ່ສະເໜີຕໍ່ອາຍຸຂອງໃບຢັ້ງຢືນ ກໍຈະຖືກໂຈະ ຫຼື ຖອນໃບຢັ້ງຢືນດຳເນີນກິດຈະການດັ່ງກ່າວ.

ການປະກອບເອກະສານຂໍຕໍ່ອາຍຸ ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ບົດລາຍງານການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ແບບພິມ ຮງມ 07;
3. ປະກອບເອກະສານຕາມມາດຕາ 31 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງໄດ້ຮັບຊຸດເອກະສານຂໍຕໍ່ອາຍຸແລ້ວ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງລົງກວດກາເບິ່ງພື້ນທີ່ຂອງໂຮງງານຕົວຈິງ ພ້ອມທັງສ້າງບົດບັນທຶກການລົງກວດກາ ພາຍຫຼັງໄດ້ປະຕິບັດຄົບຖ້ວນຕາມຂັ້ນຕອນແລ້ວ ຕ້ອງຕໍ່ໃບຢັ້ງຢືນດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ແບບພິມ ຮງມ 08 ແລະ ແບບພິມ ຮງມ 09 ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 38 ການໂຈະການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ບໍ່ປະຕິບັດຕາມເງື່ອນໄຂຂອງການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້;
3. ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
4. ປິດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນ ກ່ຽວກັບການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ;
5. ບໍ່ປະຕິບັດການແກ້ໄຂບັນຫາ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ພາຍຫຼັງມີການແຈ້ງເຕືອນ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ການໂຈະ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີກຳນົດເວລາທີ່ແນ່ນອນ ເພື່ອ

ໃຫ້ເຈົ້າຂອງໂຮງງານ ປັບປຸງ ແລະ ແກ້ໄຂ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ໂຈະການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງເພື່ອຊາບ.

**ມາດຕາ 39 ການຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈະຖືກຖອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ ທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້;
2. ບໍ່ດຳເນີນກິດຈະການພາຍໃນກຳນົດ ສອງ ປີ ໂດຍມີການແຈ້ງໂຈະເປັນລາຍລັກອັກສອນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
3. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງໂຮງງານອຸດສາຫະກຳປຸງແຕ່ງໄມ້;
4. ຕາມການສະເໜີຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້;
5. ຕາມການຕັດສິນຂອງສານ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ແລ້ວ, ຈາກນັ້ນຈຶ່ງນຳສະເໜີຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາຍົກເລີກ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ປະທານຄະນະກຳມະການປົກຄອງຂັ້ນແຂວງ ອອກຂໍ້ຕົກລົງ ວ່າດ້ວຍ ການຍົກເລີກດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດນ້ອຍ ແລະ ຂະໜາດກາງ ໂດຍນຳໃຊ້ແບບພິມ ຂຍຮ 14;
2. ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ ວ່າດ້ວຍ ການຍົກເລີກດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດໃຫຍ່ ໂດຍນຳໃຊ້ແບບພິມ ຂຍຮ 15.

ພາຍຫຼັງ ຍົກເລີກຂໍ້ຕົກລົງດັ່ງກ່າວແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາຍົກເລີກໃບທະບຽນວິສາຫະກິດ ຕາມກົດໝາຍ.

**ມາດຕາ 40 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ຄືນໃໝ່**

ໃນກໍລະນີ ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການ ຕ້ອງຍື່ນໃບຄຳຮ້ອງ ຫາຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ ອອກໃບຢັ້ງຢືນຄືນໃໝ່.

**ມາດຕາ 41 ຄ່າທຳນຽມອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຄ່າທຳນຽມອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍ ແລະ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ຄືນໃໝ່ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ກຳນົດໄວ້ ໃນແຕ່ລະໄລຍະ.

## ໝວດທີ 6
## ການປ່ຽນແປງກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 42 ການປ່ຽນແປງກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການປ່ຽນແປງກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານອຸດສາຫະກຳປຸງແຕ່ງໄມ້;

2. ການຍົກຍ້າຍໂຮງງານອຸດສາຫະກໍາປຸງແຕ່ງໄມ້;
3. ການຍົກຍ້າຍເຄື່ອງຈັກໂຮງງານອຸດສາຫະກໍາປຸງແຕ່ງໄມ້;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້;
5. ການສືບທອດການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້.

**ມາດຕາ 43** ການຂະຫຍາຍໂຮງງານອຸດສາຫະກໍາປຸງແຕ່ງໄມ້

ການຂະຫຍາຍໂຮງງານອຸດສາຫະກໍາປຸງແຕ່ງໄມ້ ປະກອບ ມີ ດັ່ງນີ້:

1. ການຂະຫຍາຍໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໂດຍການເພີ່ມເຄື່ອງຈັກ ມີ ສອງ ກໍລະນີ ດັ່ງນີ້:

- ກໍລະນີທີ ໜຶ່ງ: ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທີ່ມີກໍາລັງແຮງຂອງເຄື່ອງຈັກລວມ ທີ່ອະນຸຍາດໃນເບື້ອງຕົ້ນບໍ່ເກີນ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

- ກໍລະນີທີ ສອງ: ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທີ່ມີກໍາລັງແຮງຂອງເຄື່ອງຈັກລວມ ທີ່ອະນຸຍາດໃນເບື້ອງຕົ້ນເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ແຮງມ້າ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

2. ການຂະຫຍາຍໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໂດຍການເພີ່ມເນື້ອທີ່ອາຄານ ມີ ສອງ ກໍລະນີ ດັ່ງນີ້:

- ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸຍາດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

- ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸຍາດໃນເບື້ອງຕົ້ນເກີນກວ່າ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ການຂະຫຍາຍໂຮງງານອຸດສາຫະກໍາປຸງແຕ່ງໄມ້ ດ້ວຍການເພີ່ມອາຄານໃໝ່ ທີ່ບໍ່ແມ່ນອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນ ບໍ່ຖືວ່າເປັນການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ.

ຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ຄືກັນກັບການຂໍອະນຸຍາດດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃນສ່ວນທີ່ຂະຫຍາຍ.

**ມາດຕາ 44** ການຍົກຍ້າຍໂຮງງານອຸດສາຫະກໍາປຸງແຕ່ງໄມ້

ຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສາມາດຍົກຍ້າຍໂຮງງານໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ກ່ຽວກັບ ການສ້າງຕັ້ງ ແລະ ດໍາເນີນກິດຈະການ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຢູ່ສະຖານທີ່ໃໝ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານ ຕ້ອງສະເໜີຂໍໂຈະການດໍາເນີນກິດຈະການ ຫຼື ຖອນໃບອະນຸຍາດ ໂຮງງານຫຼັງເດີມ.

ສໍາລັບ ເຄື່ອງຈັກ ແລະ ສິ່ງປຸກສ້າງ ທີ່ຈະຍົກຍ້າຍ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ.

**ມາດຕາ 45** ການຍົກຍ້າຍເຄື່ອງຈັກ

ຜູ້ດໍາເນີນກິດຈະການ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງ ຮູບການ ຄື ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນ ຢູ່ພາຍໃນໂຮງງານ ໄປສະຖານທີ່ອື່ນເປັນການຊົ່ວຄາວ ໃຫ້ຍື່ນໃບຄໍາຮ້ອງຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ພ້ອມທັງລະບຸເຫດຜົນຂອງ

ການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ, ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຕ້ອງເອົາກັບຄືນ ພາຍໃນ ໜຶ່ງ ປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ, ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ ໜຶ່ງ ປີ ໃຫ້ສະເໜີຕໍ່ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໂດຍຊີ້ແຈງເຫດຜົນໃຫ້ລະອຽດໃນການຂໍຕໍ່ເວລາດັ່ງກ່າວ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຕ້ອງລາຍງານ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ, ໃນນັ້ນຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ.

**ມາດຕາ 46 ການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຜູ້ອື່ນ, ຜູ້ດຳເນີນກິດຈະການຜູ້ເກົ່າ ຕ້ອງລາຍງານໃຫ້ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການ ເປັນຕົ້ນໄປ.

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການນັ້ນ ຕ້ອງຍື່ນໃບຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຫຼື ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການ ຈາກເຈົ້າຂອງເດີມ ມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການ ພາຍໃນ ສາມສິບ ວັນ ນັບແຕ່ວັນເຊັນສັນຍາການໂອນ, ເຊົ່າ ຫຼື ຊື້ ກິດຈະການດັ່ງກ່າວ.

**ມາດຕາ 47 ການສືບທອດການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຊາບ ພາຍໃນ ຫົກສິບ ວັນ ນັບແຕ່ວັນຜູ້ດຳເນີນກິດຈະການ ໄດ້ເສຍຊີວິດ ແລະ ຍື່ນໃບຄຳຮ້ອງຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຫາ ຂະແໜງການທີ່ກ່ຽວຂ້ອງ ເພື່ອປ່ຽນຊື່ຈາກ ຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

## ໝວດທີ 7
## ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 48 ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການຄັດເລືອກ ແລະ ປັບປຸງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ມີຄຸນນະພາບ, ເໝາະສົມກັບຄວາມອາດສາມາດໃນການສະໜອງແຫຼ່ງວັດຖຸດິບໄມ້ ເພື່ອເພີ່ມປະສິດທິພາບການຜະລິດ, ປະຢັດວັດຖຸດິບ, ສ້າງມູນຄ່າເພີ່ມ, ຍົກລະດັບສີມືແຮງງານ, ພັດທະນາຜະລິດຕະພັນໃຫ້ມີຄຸນນະພາບ, ເປັນມິດກັບສິ່ງແວດລ້ອມ, ເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການດັດສົມໂຮງງານອຸດສາຫະກຳປຸງແຕ່ງ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນໝວດທີ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 49** ຂັ້ນຕອນການກັດສົມ ໂຮງງານອຸດສາຫະກໍາປຸງແຕ່ງໄມ້

ຂັ້ນຕອນການກັດສົມ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຕ້ອງປະຕິບັດ ດັ່ງນີ້:

1. ການແຕ່ງຕັ້ງຄະນະກໍາມະການ;
2. ການດໍາເນີນການກວດກາ;
3. ການກໍານົດແຜນປັບປຸງ;
4. ການລາຍງານຜົນການກວດກາ.

**ມາດຕາ 50** ການແຕ່ງຕັ້ງຄະນະກໍາມະການ

ການແຕ່ງຕັ້ງຄະນະກໍາມະການກັດສົມ ຕ້ອງໄດ້ຮັບການແຕ່ງຕັ້ງ ຕາມການແບ່ງຂັ້ນຄຸ້ມຄອງ. ຄະນະດັ່ງກ່າວ ປະກອບມີ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ແລະ ຂະໜາດກາງ ໂດຍແມ່ນ ທ່ານປະທານຄະນະກໍາມະການປົກຄອງ ຂັ້ນແຂວງ ເປັນຫົວໜ້າຄະນະ ຕາມການສະເໜີຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ ຊຶ່ງປະກອບດ້ວຍບັນດາພະແນກການທີ່ກ່ຽວຂ້ອງ ເປັນຄະນະ ໂດຍນໍາໃຊ້ແບບພິມ ຂຄຮງ 10;

2. ໂຮງງານຂະໜາດໃຫຍ່ ໂດຍແມ່ນ ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຫົວໜ້າຄະນະຕາມການສະເໜີຂອງກົມປ່າໄມ້ ຊຶ່ງປະກອບດ້ວຍບັນດາ ຂະແໜງການທີ່ກ່ຽວຂ້ອງ ເປັນຄະນະ ໂດຍນໍາໃຊ້ແບບພິມ ຂຄຮງ 11.

**ມາດຕາ 51** ການດໍາເນີນການກວດກາ

ການດໍາເນີນກວດກາ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃຫ້ຄະນະກໍາມະການກັດສົມ ປະຕິບັດ ດັ່ງນີ້:

1. ກວດກາດ້ານເອກະສານ ກ່ຽວກັບການອະນຸຍາດຕ່າງໆ ໃນການດໍາເນີນກິດຈະການໂຮງງານ;

2. ກວດກາການປະຕິບັດ ມາດຕະຖານໂຮງງານ ຕາມທີ່ໄດ້ກໍານົດໄວ້ໃນໝວດທີ 3 ຂອງຂໍ້ຕົກລົງສະບັບນີ້;

3. ກວດກາການປະຕິບັດເງື່ອນໄຂ ກ່ຽວກັບການສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້;

4. ກວດກາຄວາມຖືກຕ້ອງເຖິງແຫຼ່ງທີ່ມາຂອງໄມ້ ສິນເຂົ້າ ແລະ ສິນອອກ ຢູ່ໂຮງງານ.

ການດໍາເນີນການກວດກາໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແຕ່ລະຄັ້ງ ຕ້ອງສ້າງບົດບັນທຶກຮ່ວມລະຫວ່າງ ຄະນະກໍາມະການກັດສົມ ກັບເຈົ້າຂອງໂຮງງານ. ເນື້ອໃນບົດບັນທຶກ ຕ້ອງສະແດງໃຫ້ເຫັນ ສະພາບປະຫວັດຄວາມເປັນມາ, ຮູບແບບການລົງທຶນ, ການອະນຸຍາດດໍາເນີນກິດຈະການໂຮງງານ, ການໃຫ້ຄະແນນຕາມມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້ແຕ່ລະດ້ານ, ການເຄື່ອນໄຫວດໍາເນີນກິດຈະການຂອງໂຮງງານ ແລະ ສະຫຼຸບຜົນການກວດກາໂຮງງານ ໂດຍນໍາໃຊ້ແບບພິມ ບກຮງ 12 ເພື່ອເປັນຂໍ້ມູນລາຍງານຄະນະກໍາມະການປົກຄອງຂັ້ນແຂວງ ແລະ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ພ້ອມທັງກໍານົດແຜນປັບປຸງ ໃຫ້ແກ່ຜູ້ດໍາເນີນກິດຈະການໂຮງງານປຸງແຕ່ງໄມ້ ຈັດຕັ້ງປະຕິບັດ.

**ມາດຕາ 52** ການກໍານົດແຜນປັບປຸງ

ພາຍຫຼັງການລົງກວດກາ ໂດຍມີບົດບັນທຶກການກວດກາຮ່ວມ ລະຫວ່າງ ຄະນະກໍາມະການກັດສົມ ກັບເຈົ້າຂອງໂຮງງານແລ້ວ ໃຫ້ຜູ້ດໍາເນີນກິດຈະການໂຮງງານ ປະຕິບັດ ດັ່ງນີ້:

1. ສ້າງແຜນປັບປຸງໂຮງງານ ຕາມຄໍາແນະນໍາ ຂອງຄະນະກໍາມະການກວດກາ ໂດຍກໍານົດໄລຍະເວລາແລ້ວນໍາສະເໜີ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສັງລວມລາຍງານ ຫາກົມປ່າໄມ້ ເພື່ອພິຈາລະນາຢັ້ງຢືນແຜນການປັບປຸງ ແລະ ແຈ້ງໃຫ້ໂຮງງານຈັດຕັ້ງປະຕິບັດ;

2. ໃນໄລຍະການປັບປຸງ ໂຮງງານຕ້ອງຢຸດເຊົາຊົ່ວຄາວ ສໍາລັບຂອດການຜະລິດທີ່ຖືກປັບປຸງ ໂດຍໃຫ້ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສົມທົບກັບ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງຕິດຕາມກວດກາການປັບປຸງໂຮງງານ ຈົນກວ່າຈະສໍາເລັດ;

3. ໃນກໍລະນີການປັບປຸງບໍ່ສໍາເລັດຕາມແຜນການທີ່ໄດ້ກໍານົດໄວ້ ໃຫ້ຢຸດເຊົາການດໍາເນີນກິດຈະການໂຮງງານຊົ່ວຄາວ ແລະ ບໍ່ອະນຸຍາດໃຫ້ເຂົ້າຮ່ວມການປະມູນ ຊື້ ຂາຍໄມ້ ແລະ ຫ້າມນໍາວັດຖຸດິບໄມ້ ເຂົ້າໂຮງງານຢ່າງເດັດຂາດ.

ໃນກໍລະນີ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ບໍ່ໄດ້ປັບປຸງຕາມແຜນການປັບປຸງ ຫຼື ປັບປຸງບໍ່ໄດ້ມາດຕະຖານ ຕາມທີ່ໄດ້ກໍານົດໄວ້ໃນໝວດທີ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກຖອນໃບຢັ້ງຢືນດໍາເນີນກິດຈະການໂຮງງານ ແລະ ສະເໜີຜູ້ອອກຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ເພື່ອພິຈາລະນາຍົກເລີກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 53** ການລາຍງານຜົນການກວດກາ

ພາຍຫຼັງ ຄະນະກໍາມະການດັດສົມ ໄດ້ລົງກວດກາໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສໍາເລັດແລ້ວ ຄະນະດັ່ງກ່າວ ຕ້ອງໄດ້ລາຍງານຜົນການຈັດຕັ້ງປະຕິບັດໃນການລົງກວດກາໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃຫ້ປະທານຄະນະກໍາມະການປົກຄອງຂັ້ນແຂວງ ຫຼື ລັດຖະມົນຕີ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຮັບຊາບ ແລະ ຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດຂັ້ນຕອນຕໍ່ໄປ ໂດຍນໍາໃຊ້ແບບພິມ ໝາຍເລກ 13.

## ໝວດທີ 8
## ການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ

**ມາດຕາ 54** ການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ

ການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ ແມ່ນ ການບັນທຶກໄມ້ ທີ່ນໍາໃຊ້ເຂົ້າໃນຂະບວນການປຸງແຕ່ງໄມ້ຢູ່ໃນໂຮງງານ ພ້ອມທັງຄິດໄລ່ອັດຕາການນໍາໃຊ້ໄມ້ ແລະ ການສູນເສຍໄມ້ຈາກການຜະລິດ ລວມທັງ ຕິດຕາມກວດກາ, ລາຍງານ ແລະ ການເກັບຮັກສາເອກະສານຢ່າງເປັນລະບົບ ເລີ່ມແຕ່ຂັ້ນຕອນການນໍາເຂົ້າໄມ້ ຈົນເຖິງ ຂັ້ນຕອນການສົ່ງອອກໄມ້ ຈາກໂຮງງານອຸດສາຫະກໍາປຸງແຕ່ງໄມ້.

ການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ ຂອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ປະກອບດ້ວຍ:

1. ລະບົບການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ;
2. ການຕິດຕາມໄມ້ ສິ້ນເຂົ້າ ແລະ ສິ້ນອອກ;
3. ການລາຍງານໄມ້ ສິ້ນເຂົ້າ ແລະ ສິ້ນອອກ;
4. ການເກັບຮັກສາເອກະສານຕ່າງໆ.

**ມາດຕາ 55** ລະບົບການຄຸ້ມຄອງ ໄມ້ ສິ້ນເຂົ້າ ແລະ ສິ້ນອອກ

ລະບົບການຄຸ້ມຄອງ ໄມ້ ສິ້ນເຂົ້າ ແລະ ສິ້ນອອກ ຕ້ອງປະຕິບັດ ດັ່ງນີ້:

1. ການບັນທຶກໄມ້ ທີ່ນໍາເຂົ້າມາໃນໂຮງງານອຸດສາຫະກໍາປຸງແຕ່ງໄມ້ ເພື່ອເລື່ອຍເປັນ ໄມ້ ຕີຕັບ, ແປຮູບ, ຊອຍ, ປອກ, ຝານ, ສັບ, ບົດ, ຜະລິດຕະພັນ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ;
2. ການບັນທຶກໄມ້ ທີ່ນໍາອອກຈາກໂຮງງານອຸດສາຫະກໍາປຸງແຕ່ງໄມ້;
3. ການຄິດໄລ່ອັດຕາການນໍາໃຊ້ໄມ້ ແລະ ການສູນເສຍໃນຂະບວນການຜະລິດປຸງແຕ່ງ.

**ມາດຕາ 56** ການຕິດຕາມໄມ້ ສິ້ນເຂົ້າ ແລະ ສິ້ນອອກ

ການຕິດຕາມໄມ້ ສິ້ນເຂົ້າ ແລະ ສິ້ນອອກ ມີດັ່ງນີ້:

1. ເອກະສານ ຕິດຕາມໄມ້ສິ້ນເຂົ້າ ປະກອບມີ:
   1) ໃບອະນຸຍາດຂຸດຄົ້ນໄມ້;
   2) ລາຍການບັນຊີໄມ້;
   3) ສັນຍາ ຊື້ ຂາຍໄມ້;

4) ເອກະສານຢັ້ງຢືນການເສຍຄ່າພັນທະອາກອນຕ່າງໆ;
5) ໃບອະນຸຍາດເຄື່ອນຍ້າຍໄມ້ພາຍໃນ;
6) ໃບນຳສົ່ງໄມ້ ພ້ອມທັງ ຕີຕາ ປມ.

2. ເອກະສານ ຕິດຕາມໄມ້ສົ້ນອອກ ປະກອບມີ:
1) ໃບອະນຸຍາດເລື່ອຍໄມ້ ໂດຍນຳໃຊ້ແບບພິມ ບຍລມ 18;
2) ລາຍການບັນຊີໄມ້ ທີ່ນຳອອກຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍແຍກເປັນແຕ່ລະປະເພດ ແລະ ຊະນິດໄມ້;
3) ລາຍການບັນຊີໄມ້ ສູນເສຍ ຫຼື ນຳໃຊ້ບໍ່ໄດ້ ຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້.

3. ເອກະສານ ຕິດຕາມໄມ້ຄ້າງ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະກອບມີ:
1) ລາຍການບັນຊີໄມ້ ທີ່ຍັງຄ້າງ ຢູ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍແຍກເປັນແຕ່ລະປະເພດ ແລະ ຊະນິດໄມ້;
2) ລາຍການບັນຊີໄມ້ ທີ່ຜະລິດປຸງແຕ່ງແລ້ວ;
3) ລາຍການບັນຊີໄມ້ ສູນເສຍ ຫຼື ນຳໃຊ້ບໍ່ໄດ້ ຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້.

### ມາດຕາ 57 ການລາຍງານໄມ້ ສົ້ນເຂົ້າ ແລະ ສົ້ນອອກ

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງ ຕ້ອງສະຫຼຸບລາຍງານຂໍ້ມູນ ໄມ້ສົ້ນເຂົ້າ, ໄມ້ສົ້ນອອກ ແລະ ໄມ້ຄ້າງສາງ ຫຼື ໂຮງງານ ແລ້ວສົ່ງໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ດັ່ງນີ້:

1. ໄຕມາດ 1: ໃຫ້ສົ່ງ ໃນລະຫວ່າງ ວັນທີ 31 ມີນາ ຫາ ວັນທີ 10 ເມສາ;
2. ໄຕມາດ 2: ໃຫ້ສົ່ງ ໃນລະຫວ່າງ ວັນທີ 30 ມິຖຸນາ ຫາ ວັນທີ 10 ກໍລະກົດ;
3. ໄຕມາດ 3: ໃຫ້ສົ່ງ ໃນລະຫວ່າງ ວັນທີ 30 ກັນຍາ ຫາ ວັນທີ 10 ຕຸລາ;
4. ໄຕມາດ 4: ໃຫ້ສົ່ງ ໃນລະຫວ່າງ ວັນທີ 31 ທັນວາ ຫາ ວັນທີ 10 ມັງກອນ ຂອງປີຖັດໄປ.

ໃນກໍລະນີ ບໍ່ສາມາດສົ່ງບົດລາຍງານຕາມກຳນົດເວລາ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງໄມ້ ຕ້ອງຊີ້ແຈງເຫດຜົນ ເປັນລາຍລັກອັກສອນໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອຮັບຊາບ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ຕ້ອງສົມທົບກັບພາກສ່ວນກ່ຽວຂ້ອງ ລົງກວດກາຂໍ້ມູນຕົວຈິງ ແລະ ສ້າງບົດບັນທຶກຮັບຮູ້ ໂດຍກຳນົດວັນທີສົ່ງບົດລາຍງານ.

### ມາດຕາ 58 ການເກັບຮັກສາເອກະສານ

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງໄມ້ ຕ້ອງເກັບຮັກສາເອກະສານ ກ່ຽວກັບໄມ້ ສົ້ນເຂົ້າ ແລະ ສົ້ນອອກ ທັງໝົດຢ່າງເປັນລະບົບ ແລະ ສາມາດຊອກຫາໄດ້ງ່າຍ ເປັນຕົ້ນ ບົດບັນທຶກການຜະລິດ, ຂໍ້ມູນການຜະລິດ, ເອກະສານການຈຳໜ່າຍ ຊື້ ຂາຍ, ໃບອະນຸຍາດເຄື່ອນຍ້າຍໄມ້ພາຍໃນ ຫຼື ສົ່ງອອກ, ບົດລາຍງານ ແລະ ເອກະສານກ່ຽວຂ້ອງອື່ນ.

ການເກັບຮັກສາເອກະສານ ຕ້ອງຮັບປະກັນຄວາມປອດໄພ ແລະ ຮັກສາໄວ້ຢ່າງໜ້ອຍ ສິບ ປີ ລວມທັງ ສະບັບຕົ້ນ ແລະ ສະບັບສຳເນົາ ແບບລະບົບທຳມະດາ ແລະ ແບບລະບົບເອເລັກໂຕຣນິກ.

## ໝວດທີ 9
## ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

### ມາດຕາ 59 ສິດ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ສິດ ດັ່ງນີ້:

1. ສະເໜີຂໍອະນຸມັດແຜນຂຸດຄົ້ນໄມ້ ໃນເຂດທີ່ລັດອະນຸຍາດ;

2. ເປັນເຈົ້າກຳມະສິດໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ໄດ້ຮັບຜົນປະໂຫຍດຈາກການດຳເນີນກິດຈະການ ທີ່ຖືກຕ້ອງຂອງຕົນ;

3. ປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດສິດທີ່ໄດ້ຮັບອະນຸຍາດ ໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້;

5. ສະເໜີ ຂໍນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳ ຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້;

6. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້ ຂາຍ, ຂະຫຍາຍການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້, ຢຸດເຊົາກິດຈະການ ຕາມກົດໝາຍ ແລະ ລະບຽບການ;

7. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 60 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ໃບຢັ້ງຢືນດຳເນີນກິດຈະການ;

2. ເສຍ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

3. ຜູ້ປະກອບການ ທີ່ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີພື້ນທີ່ປູກ ແລະ ຟື້ນຟູ ເພື່ອຮັບປະກັນການຕອບສະໜອງວັດຖຸດິບ ໃຫ້ມີຄວາມຍືນຍົງ;

4. ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ສະຫວັດດີການສັງຄົມ, ອຸປະກອນປ້ອງກັນຄວາມປອດໄພ;

5. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ສານເຄມີ ແລະ ໄພພິບັດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ລາຍງານ ການເກີດອຸປະຕິເຫດ ຂັ້ນຮ້າຍແຮງ ຢູ່ພາຍໃນໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງທັນການ;

7. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານອຸດສາຫະກຳປຸງແຕ່ງໄມ້ຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;

8. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ;

9. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

10. ກ່ອນຢຸດເຊົາດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງໄດ້ບຳບັດນ້ຳເປື້ອນ, ບຳບັດ ຫຼື ກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລັດ;

12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້

**ມາດຕາ 61** ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້

ກົມປ່າໄມ້ ຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແລະ ເປັນເຈົ້າການໃນການປະສານສົມທົບກັບ ບັນດາກົມຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ປະກອບດ້ວຍ:

1. ກົມປ່າໄມ້, ກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
2. ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 62** ສິດ ແລະ ໜ້າທີ່ ຂອງກົມປ່າໄມ້

ກົມປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ໃຫ້ພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ, ໂຮງງານອຸດສາຫະກໍາປຸງແຕ່ງໄມ້;
2. ຄົ້ນຄວ້າ ແລະ ສະເໜີ ລັດຖະມົນຕີ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ ສ້າງຕັ້ງ ແລະ ຍົກເລີກ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຂະໜາດໃຫຍ່;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້;
4. ຈັດກອງປະຊຸມປຶກສາຫາລື ຮ່ວມກັບ ພາກລັດ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ, ສະມາຄົມອຸດສາຫະກໍາປຸງແຕ່ງໄມ້ແຫ່ງຊາດລາວ, ສະມາຄົມເຟີນີເຈີໄມ້ລາວ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ພາຍໃນ ແລະ ສາກົນ ກ່ຽວກັບ ວຽກງານການຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້;
5. ສົມທົບກັບພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້;
6. ສະຫຼຸບ ແລະ ລາຍງານວຽກງານຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃຫ້ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ;
7. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 63** ສິດ ແລະ ໜ້າທີ່ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ

ພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ໃຫ້ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ ແລະ ນໍາສະເໜີ ປະທານຄະນະກໍາມະການປົກຄອງຂັ້ນແຂວງ ອອກ ຂໍ້ຕົກລົງ ສ້າງຕັ້ງ ແລະ ຍົກເລີກ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຂະໜາດນ້ອຍ ແລະ ຂະໜາດກາງ;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຂະໜາດກາງ ແລະ ຂະໜາດນ້ອຍ ແລະ ຢັ້ງຢືນມາດຕະຖານຜະລິດຕະພັນໄມ້ ອອກຈາກ ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໂດຍນໍາໃຊ້ແບບພິມ ບຢຜມ 20;
4. ຈັດກອງປະຊຸມປຶກສາຫາລື ຮ່ວມກັບ ພາກລັດ, ສະພາການຄ້າ ແລະ ອຸດສາຫະກໍາຂັ້ນແຂວງ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ພາຍໃນ ແລະ ສາກົນ ກ່ຽວກັບ ວຽກງານການຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງໄມ້;

5. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ຢັ້ງຢືນແຜນການເຄື່ອນໄຫວ ປະຈຳງວດ ແລະ ປະຈຳປີ ຂອງໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ;

7. ຄຸ້ມຄອງ ແລະ ຕິດຕາມ ໄມ້ສົ້ນເຂົ້າ ແລະ ສົ້ນອອກ ຢູ່ໃນຄວາມຮັບຜິດຊອບຕາມສິດ ແລະ ໜ້າທີ່ຂອງຕົນ;

8. ອອກໃບຢັ້ງຢືນ ຜະລິດຕະພັນໄມ້ ອອກຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ແບບພິມ ບຢຜມ 20;

9. ສະຫຼຸບ ແລະ ລາຍງານວຽກງານ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຄະນະກຳມະການປົກຄອງຂັ້ນແຂວງ ແລະ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ ເປັນແຕ່ລະໄລຍະ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 64** ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ເຈົ້າຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

3. ຄຸ້ມຄອງ ແລະ ຕິດຕາມ ໄມ້ສົ້ນເຂົ້າ ແລະ ສົ້ນອອກ ທີ່ຢູ່ໃນຄວາມຮັບຜິດຊອບ ຕາມສິດ ແລະ ໜ້າທີ່ ຂອງຕົນ;

4. ສະຫຼຸບ ແລະ ລາຍງານວຽກງານ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຄະນະກຳມະການປົກຄອງຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອຊາບ ເປັນແຕ່ລະໄລຍະ;

5. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 65** ເນື້ອໃນການກວດກາ

ເນື້ອໃນການກວດກາວຽກງານການຄຸ້ມຄອງ ໂຮງງານ ອຸດສາຫະກຳປຸງແຕ່ງໄມ້ ມີ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ໂຮງງານ ອຸດສາຫະກຳປຸງແຕ່ງໄມ້;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
3. ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 66** ຮູບການການກວດກາ

ຮູບການການກວດກາວຽກງານການຄຸ້ມຄອງ ຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

ການດຳເນີນການກວດກາ ວຽກງານຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

